

# ຫ້າງຫາກະກຽມຕໍ່ໄພພິບັດ :
# ໄພນ້ຳຖ້ວມ


ໃນຕອນບ່າຍມື້ໜຶ່ງ ທີ່ຝົນກຳລັງຕົກ...
ຝົນຕົກຫຼາຍມື້ແລ້ວ! ຂ້ອຍເບື່ອແທ້ໆ!
ໂອ ຂ້ອຍຫວັງວ່າມັນຊິເຊົາຕົກ ເຮົາຈຶ່ງຊິໄດ້ອອກໄປຫຼິ້ນ!
ຈົ່ງກະກຽມໄວ້! ອາດຈະມີໄພນ້ຳຖ້ວມ!
ເຢ! ອີກບໍ່ດົນເຮົາກໍ່ຈະ ໄດ້ອອກໄປຫຼິ້ນນ້ຳຢູ່ນອກແລ້ວ!
ນ້ຳຖ້ວມມັນອັນຕະລາຍໄດ໋ ຕົ້ນ! ເຈົ້າບໍ່ຄວນໄປຫຼິ້ນ ຫຼື ລອຍນ້ຳຫັ້ນໄດ໋!
ນ້ຳຖ້ວມ ສາມາດພັດເອົາລົດ, ຕົ້ນໄມ້ ແລະ ເຮັດໃຫ້ເສົາໄຟຟ້າລົ້ມໄດ້ໄດ໋! ນ້ຳຖ້ວມສາມາດ ທຳລາຍເຮືອນ ແລະ ຍັງເປັນອັນຕະລາຍຕໍ່ຄົນ ຈົນເຖິງແກ່ຊີວິດກໍ່ໄດ້ໃດ໋!!
ໂອ ບໍ່ຕີ໋! ພວກເຮົາຄວນ ເຮັດແນວໃດ ຟ້າ?!!...
ຕ້ອງສ້າງຄູກັນນ້ຳ ເພື່ອພະຍາຍາມຢຸດນ້ຳ ທີ່ຈະ ໄຫຼເຂົ້າທາງປະຕູ, ປ່ອງຢ້ຽມ ແລະ ຊ່ອງລົມ!
ເປັນຄວາມຄິດທີ່ດີ ຟ້າ!
ໃນກໍລະນີທີ່ມີນ້ຳຖ້ວມໜັກ ພວກເຮົາຕ້ອງມີບາງຢ່າງທີ່ຊ່ວຍໃຫ້ ພວກເຮົາຟູຢູ່ເທິງນ້ຳໄດ້ ຕົ້ນ
ຂ້ອຍຮູ້ແລ້ວ! ພວກເຮົາໃຊ້ບ່ອນນອນ ຟອງນ້ຳຂອງຂ້ອຍກໍ່ໄດ້!
ພວກເຮົາຕ້ອງໄດ້ຮ່າຍ ນ້ຳດື່ມໃຊ້ຂວດນ້ຳໄວ້ແດ່
ແລະ ອ່າງເກັບນ້ຳສະອາດ ເພື່ອ ເອົາໄວ້ເຮັດຄວາມສະອາດຕົນເອງ
ຕົ້ນ, ເຈົ້າຊ່ວຍຂ້ອຍເກັບສະບຽງອາຫານ ແລະ ເອກະສານສຳຄັນ ໃສ່ພາສະນະກັນນ້ຳໄວ້ແດ່
ຈາກນັ້ນ, ພວກເຮົາຕ້ອງ ເອົາມ້ຽນໄວ້ບ່ອນສູງ
ໄດ້ເລີຍ!


ຖ້າລະດັບນ້ຳຂຶ້ນມາຮອດບ່ອນນີ້, ພວກຄວນຍ້າຍອອກໄປ!
ແຕ່ວ່າ ເປັນຫຍັງ ຟ້າ? ລະດັບ ນ້ຳພຽງແຕ່ 10 ຊັງຕີແມັດ ມັນບໍ່ໄດ້ເລິກໄດ໋!
ນ້ຳຖ້ວມພຽງແຕ່ 15 ຊັງຕີແມັດ ກໍ່ເລິກພໍທີ່ ຈະພັດຕີນຂອງເຈົ້າໄດ້ແລ້ວ ຕົ້ນເອີຍ!
ໂອ! ໂອ!
ດັ່ງນັ້ນ, ຖ້າລະດັບນ້ຳສູງເກີນລະດັບທີ່ໝາຍ ໄວ້ນີ້ ພວກເຮົາຕ້ອງຍ້າຍອອກໄປ ແລະ ພະຍາຍາມໄປຢູ່ບ່ອນສູງໄວ້
ເປັນວິທີທີ່ ຟ້າ! ພວກເຮົາຈະໄປໃສລະ?
ໄປຫຼັງຄາ!
ຕໍ່ມາ ບໍ່ດົນ...
ໄພນ້ຳຖ້ວມທີ່ຄາດໄວ້! ດຽວນີ້! ເກີດຂຶ້ນແລ້ວ!
ໄປເທິງຫຼັງຄາເຖາະ!!
ເອົາ ບ່ອນນອນຟອງນ້ຳ, ສະບຽງອາຫານ ແລະ ນ້ຳດື່ມໄປນຳແດ່!
ອຸ່ຍ! ເປັນຕາ ຕື່ນເຕັ້ນແທ້!
ຂ້ອຍຄິດວ່າມັນຍັງດີກວ່າ ກ່ອນຈະຖືກນ້ຳຖ້ວມ
ຫຼາຍມື້ ຕໍ່ມາ...
ທຸກຢ່າງເປັນປົກກະຕິແລ້ວ! ລະດັບນ້ຳຖ້ວມ ກຳລັງຫຼຸດລົງ.ກວດກາເບິ່ງຄວາປອດໄພກ່ອນ ຈຶ່ງກັບຄືນໄປ.
ເຢ! ນ້ຳຖ້ວມ ເຊົາແລ້ວ
ຍັງອີກດົນກໍ່ຊິເຊົາ ຕົ້ນ. ການເຮັດຄວາມ ສະອາດ ແລະ ຕາກທຸກຢ່າງໃຫ້ແຫ້ງ ໃນເຮືອນນີ້ ຕ້ອງໃຊ້ເວລາຫຼາຍອາທິດ!
ແຕ່ວ່າ ຢ່າງໜ້ອຍ ພວກເຮົາກໍ່ປອດໄພ!
ແມ່ນແລ້ວ! ແລະ ທັງໝົດນີ້ຕ້ອງ ຂອບໃຈເຈົ້າ ຟ້າ! ທີ່ເຈົ້າຮູ້ ວ່າຊິເຮັດແນວໃດຢູ່ສະເໝີ!

ຂ້າງລຸ່ມນີ້ແມ່ນບັນຊີສິ່ງຂອງຕ່າງໆທີ່ຄວນຈື່ຖ້າຫາກມີໄພນ້ຳຖ້ວມເກີດຂຶ້ນ. ຈົ່ງສຶກສາມັນໃຫ້ດີ,ຄຳແນະນຳເຫລົ່ານີ້ຈະ ເຮັດໃຫ້ເຈົ້າແລະຄອບຄົວຂອງເຈົ້າ ເຫັນຄວາມແຕກຕ່າງທັງໝົດ.

- ຕ້ອງຮັບປະກັນວ່າທຸກຄົນໃນຄອບຄົວຂອງທ່ານຮູ້ວ່າຈະອົບພະ ຍົບໄປຢູ່ໃສ ແລະ ດ້ວຍວິທີໃດ
- ປະກອບສ່ວນໃນການຝຶກຊ້ອມກ່ຽວກັບໄພນ້ຳຖ້ວມ ຢູ່ບ້ານ, ບ່ອນເຮັດວຽກ ແລະ ໂຮງຮຽນ ຢູ່ສະເໝີ
- ເກັບເອກະສານສຳຄັນ, ສິ່ງຂອງມີຄ່າ ແລະ ສານເຄມີຕ່າງໆ ໃສ່ພາຊະນະກັນນ້ຳ ໄວ້ເໜືອລະດັບນ້ຳຖ້ວມ
- ກະກຽມກະສອບຊາຍ ແລະ ແຜ່ນຢາງ ເພື່ອໃຊ້ຢຸດນ້ຳ ທີ່ຈະໄຫຼເຂົ້າມາໃນ ບ່ອນຢູ່ຂອງທ່ານ
- ເກັບ ນ້ຳດື່ມ ແລະ ນ້ຳໃຊ້ ໃສ່ຂວດນ້ຳ ແລະ ພາຊະນະອື່ນໆໄວ້
- ປິດເຄື່ອງໃຊ້ໄຟຟ້າ, ແກັສ ແລະ ນ້ຳ
- ກະກຽມຂັ້ນໄດ ແລະ ເຊືອກໄວ້ສຳລັບຫຼົບໜີຂຶ້ນໄປຫຼັງຄາ
- ບໍ່ຄວນພະຍາຍາມຝ່າສາຍນ້ຳທີ່ກຳລັງໄຫຼ ຕາມຫົນທາງ ຫຼື ເທິງຂົວ
- ຫ້າມດື່ມ, ຫຼິ້ນ ຫຼື ລອຍ ນ້ຳທີ່ໄຫຼມາເດັດຂາດ
- ລະວັງ ງູ ທີ່ມີພິດຕ່າງໆ



ຮຽນຮູ້ເພີ່ມເຕີມກ່ຽວກັບໄພພິບັດກະລຸນາເຂົ້າເບິ່ງ:
*www.redcross.org/prepare/disaster/flood*

ອົງການກາແດງລາວ ສູນກາງ ຖະໜົນເສດຖາທິລາດ, ຮ່ອມວັດຊຽງຍືນ

ຕູ້ ປ ນ 650

ນະຄອນຫຼວງວຽງຈັນ, ສປປ ລາວ

Tel: +(856 21) 216610, 253014

Fax: +(856 21) 212128, 253014

ເຮັດໃຫ້ເປັນໄປໄດ້ດ້ວຍການສະໜັບສະໜູນຂອງ

ຊ່ວຍເຫຼືອດ້ານມະນຸດສະທຳ ແລະ ປົກປ້ອງພົນລະເຮືອນ

International Federation of Red Cross and Red Crescent Societies

CANADIAN RED CROSS

日本赤十字社 Japanese Red Cross Society

Norwegian Red Cross